# ຄໍາແນະນໍາ ແລະການລົງໂທດ
# ໃບລາຍງານສະຖານະການມີສິດໄດ້ຮັບ SAR 7
## ສໍາລັບການຊ່ວຍເຫຼືອເງິນສົດ ແລະ CalFresh

ຕ້ອງການຄວາມຊ່ວຍເຫຼືອບໍ? ໂທຫາຄາວຕີ້.

- ຖ້າທ່ານບໍ່ສົ່ງໃບລາຍງານຄົບຖ້ວນ, ໂດຍທີ່ບໍ່ຈໍາກັດແຕ່ດ່ໄປນີ້ ລວມມີການຕອບຄໍາຖາມຢູ່ໃນໃບ SAR 7 ແລະການຄັດຕິດຫຼັກຖານໃສ່ ເມື່ອພວກເຮົາຖາມເອົາ, ເງິນຊ່ວຍເຫຼືອຂອງທ່ານອາດຈະຖືກຊັກຊ້າ, ປ່ຽນແປງ, ຫຼືຢຸດ. **ຖ້າຈໍາເປັນກໍ່ຂຽນເພີ່ມໃສ່ເຈ້ຍໃບໃໝ່ຕື່ມໄດ້.**
- ຂໍ້ເທັດຈິງທີ່ທ່ານລາຍງານອາດຈະມີຜົນຕໍ່ເງິນຊ່ວຍເຫຼືອຂອງທ່ານທີ່ຈະເພີ່ມຂຶ້ນ, ຫຼຸດລົງ, ຫຼືຖືກຢຸດ.
- ໃຫ້ສົ່ງໃບລາຍງານຄົບຖ້ວນຂອງທ່ານພາຍໃນມື້ທີ 5 ຂອງເດືອນຫຼັງຈາກເດືອນລາຍງານ. ຫຼັງຈາກມື້ທີ 11 ແລ້ວ ແມ່ນມັນຈະຊັກຊ້າ.

## ຕົວຢ່າງ

**ລາຍໄດ້**

- ຄ່າຈ້າງ
- ຈ່າຍຄ່າວັນພັກ
- ການບໍລິການຊ່ວຍ ເຫຼືອທີ່ບ້ານ (IHSS)
- ການຊ່ວຍລ້ຽງດູລູກ/ຜົວ/ເມຍ
- ການແກ້ໄຂປະກັນໄພ ຫຼືທາງກົດໝາຍ
- ລາຍໄດ້ການເຊົ່າ ແລະການຊ່ວຍເຫຼືອການເຊົ່າ
- ເງິນຊ່ວຍເຫຼືອລັດຖະບານອື່ນໆ
- ການຊົດໃຊ້ຄວາມພິການຂອງລັດ
- ເຮັດທຸລະກິດສ່ວນຕົວ
- ເງິນທິບ
- ດອກເບ້ຍ ຫຼືເງິນປັນຜົນ
- ເງິນຊ່ວຍເຫຼືອການປະທ້ວງ
- ການຈ່າຍເງິນຄືນພາສີ
- ຫວ່າງງານ
- ປະກັນສັງຄົມ
- ລາຍໄດ້ປະກັນເສີມ/ ການຈ່າຍເສີມຂອງລັດ (SSI/SSP)
- ເງິນເດືອນ
- ລາຍໄດ້ເປັນວັດຖຸເຊັ່ນ: ທີ່ຢູ່ອາໄສທີ່ຫາໄດ້ມາ, ທີ່ຢູ່ອາໄສ/ສິ່ງອໍານວຍຄວາມສະດວກ/ເຄື່ອງນຸ່ງຫົ່ມ/ອາຫານຟຣີ
- ເງິນລາງວັນການພະນັນ/ລັອດເຕີຣີ
- ເງິນສົດ, ຂອງຂວັນ, ເງິນກູ້, ທຶນການສຶກສາ
- ຄວາມພິການ ຫຼືການບໍານານຂອງພາກເອກະຊົນອື່ນ ຫຼືລັດຖະບານ
- ການຊົດເຊີຍຜູ້ເຮັດວຽກ
- ນັກຮົບເກົ່າ ຫຼືການບໍານານພະນັກງານທາງລົດໄຟ

**ຊັບສິນບັດ**

- ພາຫະນະມີເຄື່ອງຈັກ
- ຍອດເຫຼືອເງິນຊ່ວຍເຫຼືອ EBT
- ບ້ານ
- ກະແສລາຍວັນ
- ພັນທະບັດປະຢັດ
- ທີ່ດິນ
- ປະຢັດ
- ໜັງສືປະກັນໄພຊີວິດ
- ມໍລະດົກ

**ຄ່າໃຊ້ຈ່າຍທີ່ຢູ່ອາໄສ**

- ຄ່າເຊົ່າ
- ສິ່ງອໍານວຍຄວາມສະດວກ
- ຄ່າຜ່ອນບ້ານ
- ປະກັນໄພເຈົ້າຂອງບ້ານ
- ພາສີຊັບສິນບັດ
- ຄ່າເກັບມ້ຽນຂີ້ເຫຍື້ອ/ສິ່ງເສດເຫຼືອ

**ລາຍຈ່າຍ**

- ຄ່າໃຊ້ຈ່າຍທາງການແພດ
- ເບ້ຍປະກັນສຸຂະພາບ
- ການລ້ຽງດູລູກຜູ້ຂຶ້ນກັບ
- ຄ່າຮຽນ ແລະອຸປະກອນໃນວິທະຍາໄລ
- ຄ່າທໍານຽມໂຮງຮຽນທີ່ຕ້ອງໄດ້ຈ່າຍ
- ການຊ່ວຍລ້ຽງດູລູກ/ຜົວ/ເມຍ
- ການເດີນທາງ
- ຄ່າຫ້ອງ ແລະທີ່ພັກ
- ຄ່າໃຊ້ຈ່າຍທີ່ຢູ່ອາໄສ

ລາຍໄດ້ລວມໝາຍເຖິງຈໍານວນເງິນທີ່ທ່ານໄດ້ຮັບກ່ອນການດໍາເນີນການຫັກຕ່າງໆອອກ (ຕົວຢ່າງຂອງການຫັກອອກໄດ້ແກ່: ພາສີ, ປະກັນສັງຄົມ ຫຼືການປະກອບເຂົ້າໃສ່ເງິນບໍານານ, ເບ້ຍປະກັນແຜນປະກັນດູແລສຸຂະພາບ, ການອອກໝາຍຢຶດຊັບ, ອື່ນໆ).

## ການລົງໂທດ

**ການລົງໂທດສໍາລັບການສໍ້ໂກງການຊ່ວຍເຫຼືອເງິນສົດ: ຖ້າທ່ານບໍ່ປະຕິບັດຕາມກົດລະບຽບ ການຊ່ວຍເຫຼືອເງິນສົດໂດຍເຈດຕະນາ, ການຊ່ວຍເຫຼືອເງິນສົດຂອງທ່ານສາມາດຫຼຸດລົງເປັນ ໄລຍະເວລາໜຶ່ງ ແລະທ່ານອາດຈະຖືກປັບໄໝເຖິງ $10,000 ແລະ/ຫຼືຖືກສົ່ງໄປເຂົ້າຄຸກ/ ຈໍາຄຸກເປັນເວລາ 3 ປີ.**

**ການຊ່ວຍເຫຼືອເງິນສົດຂອງທ່ານສາມາດຖືກຢຸດໄດ້:**

- ສໍາລັບການບໍ່ລາຍງານທຸກຂໍ້ເທັດຈິງ ຫຼືສໍາລັບການໃຫ້ຂໍ້ເທັດຈິງທີ່ບໍ່ຖືກຕ້ອງ 6 ເດືອນສໍາລັບການກະທໍາຜິດຄັ້ງທໍາອິດ, 12 ປີສໍາລັບການກະທໍາຜິດຄັ້ງທີສອງ, ຫຼືຕະຫຼອດຊີບສໍາລັບຄັ້ງທີສາມ.
- ສໍາລັບການສົ່ງໃບສະໝັກຂໍໜຶ່ງ ຫຼືຫຼາຍສະບັບ ເພື່ອໃຫ້ໄດ້ການຊ່ວຍເຫຼືອ ຫຼາຍກວ່າໜຶ່ງເລື່ອງໃນໄລຍະເວລາດຽວກັນ: 2 ປີສໍາລັບການຕັດສິນໂທດຄັ້ງທໍາອິດ, 4 ປີສໍາລັບຄັ້ງທີສອງ, ແລະຕະຫຼອດຊີບສໍາລັບຄັ້ງທີສາມ.
- ສໍາລັບການຕັດສິນການສໍ້ໂກງທີ່ມີຄວາມຜິດຮ້າຍແຮງ ເພື່ອໃຫ້ໄດ້ການຊ່ວຍເຫຼືອ: 2 ປີສໍາລັບການລັກທີ່ມີຈໍານວນເງິນຕໍ່າກວ່າ $2,000; 5 ປີສໍາລັບຈໍານວນເງິນ $2,000 ຫາ $4,999; ແລະຕະຫຼອດຊີບສໍາລັບຈໍານວນເງິນ $5,000 ຫຼືຫຼາຍກວ່ານັ້ນ.
- ຕະຫຼອດຊີບ: ສໍາລັບການໃຫ້ຫຼັກຖານການຢູ່ອາໄສປອມແກ່ທາງຄາວຕີ້ ເພື່ອໃຫ້ໄດ້ຮັບການຊ່ວຍເຫຼືອຢູ່ໃນສອງຄາວຕີ້ ຫຼືລັດ ຫຼືຫຼາຍກວ່ານັ້ນໃນເວລາດຽວກັນ; ການໃຫ້ຂໍ້ເທັດຈິງບໍ່ຖືກຕ້ອງແກ່ທາງຄາວຕີ້ສໍາລັບເດັກທີ່ບໍ່ມີສິດໄດ້ຮັບ ຫຼືເດັກທີ່ບໍ່ມີຢູ່ແລ້ວ; ການໄດ້ຮັບເງິນຫຼາຍກວ່າ $10,000 ໃນເງິນຊ່ວຍເຫຼືອເງິນສົດຜ່ານການສໍ້ໂກງ; ການໄດ້ຮັບການຕັດສິນເປັນຄັ້ງທີສາມສໍາລັບການສໍ້ໂກງຢູ່ໃນສານ ຫຼືການພິຈາລະນາສືບສວນທາງດ້ານບໍລິຫານ.

**ການລົງໂທດສໍາລັບການສໍ້ໂກງ CALFRESH: ຖ້າທ່ານບໍ່ປະຕິບັດຕາມກົດລະບຽບ CalFresh ໂດຍເຈດຕະນາ, ເງິນຊ່ວຍເຫຼືອ CalFresh ຂອງທ່ານສາມາດຖືກຢຸດໄດ້ເປັນເວລາ 12 ເດືອນ ສໍາລັບການລະເມີດເທື່ອທໍາອິດ, 24 ເດືອນ ສໍາລັບເທື່ອທີສອງ, ແລະຕະຫຼອດຊີບ ສໍາລັບເທື່ອທີສາມ. ທ່ານອາດຈະຖືກປັບໄໝເຖິງ $250,000 ແລະ/ຫຼືຖືກສົ່ງໄປເຂົ້າຄຸກ/ຈໍາຄຸກເປັນເວລາ 20 ປີ.**

**ຖ້າສານ ຫຼືການພິຈາລະນາສືບສວນທາງດ້ານບໍລິຫານພົບວ່າ ທ່ານມີຄວາມຜິດ ເພາະວ່າ:**

- ທ່ານໄດ້ຄ້າ ຫຼືຂາຍເງິນຊ່ວຍເຫຼືອ CalFresh ເພື່ອຊື້ອາວຸດ, ລູກລະເບີດ, ຫຼືດິນລະເບີດ, ເງິນຊ່ວຍເຫຼືອ CalFresh ຂອງທ່ານສາມາດຖືກຢຸດໄປຕະຫຼອດຊີບ ສໍາລັບການລະເມີດຄັ້ງທໍາອິດ;
- ທ່ານໄດ້ຄ້າ ຫຼືຂາຍເງິນຊ່ວຍເຫຼືອ CalFresh ເພື່ອສານຄວບຄຸມ, ເງິນຊ່ວຍເຫຼືອ CalFresh ຂອງທ່ານສາມາດຖືກຢຸດເປັນເວລາ 24 ເດືອນສໍາລັບການລະເມີດ ຄັ້ງທໍາອິດ ແລະຕະຫຼອດຊີບສໍາລັບຄັ້ງທີສອງ;
- ທ່ານໄດ້ຄ້າ ຫຼືຂາຍເງິນຊ່ວຍເຫຼືອ CALFRESH ທີ່ມີມູນຄ່າ $500 ຫຼືຫຼາຍກວ່ານັ້ນ, ເງິນຊ່ວຍເຫຼືອ CALFRESH ຂອງທ່ານສາມາດຖືກຢຸດໄປຕະຫຼອດຊີບ;
- ທ່ານໄດ້ເອົາຂໍ້ມູນການຢູ່ອາໄສ ແລະການລະບຸຕົວປອມໃຫ້ກັບທາງຄາວຕີ້, ດັ່ງນັ້ນ ທ່ານສາມາດໄດ້ຮັບເງິນຊ່ວຍເຫຼືອ CalFresh ຫຼາຍກວ່າໜຶ່ງເລື່ອງໃນເວລາດຽວກັນ, ເງິນຊ່ວຍເຫຼືອ CalFresh ຂອງທ່ານສາມາດຖືກຢຸດໄປເປັນເວລາ 10 ປີ.